ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

0587
ເລກທີ ........../ທລຍ
ນະຄອນຫລວງວຽງຈັນ, ວັນທີ 2 ກັນຍາ 2022

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ພິມປຶ້ມສູດອາຫານ ໂພຊະນາການ ຂອງແມ່ ແລະ ເດັກ ເພື່ອຮັບໃຊ້ຊຸມຊົນ ຢູ່ 12 ເມືອງ ໃນ 4 ແຂວງພາກເໜືອ
ສັນຍາເລກທີ: PRF.III-AF/Cookbooks/G-S/2022 (AF-G.14)

ເຖິງ: ____________________________________________

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການກອງທຶນຫລຸດຜ່ອນຄວາມ ທຸກຍາກ III - ໄລຍະທຶນເພີ່ມ ແລະ ມີຈຸດປະສົງທີ່ຈະນາໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດພິມຈັດພິມປຶ້ມສູດອາຫານ ໂພຊະນາການ ຂອງແມ່ ແລະ ເດັກ ເພື່ອຮັບໃຊ້ຊຸມຊົນ ຢູ່ 12 ເມືອງ ໃນ 4 ແຂວງພາກເໜືອ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນໂຮງພິມຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສໍາລັບການຈັດພິມປຶ້ມດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 45 ວັນ. ຕາຕະລາງລາຍການລະອຽດຂອງສິ່ງພິມມີດັ່ງລຸ່ມນີ້:

| ລ/ດ | ລາຍການສິ່ງພິມ | ຫົວໜ່ວຍ | ຈໍານວນ | ກໍານົດຈັດສົ່ງ | ສະຖານທີ່ຈັດສົ່ງ |
|---|---|---|---|---|---|
| 1 | ປຶ້ມສູດອາຫານໂພຊະນາການ ຂອງແມ່ ແລະ ເດັກ | ຫົວ | 565 | 45 ວັນ | ຫ້ອງການ ທລຍ ເມືອງ ຕາມແຜນແບ່ງປັນ (4 ເມືອງ-ຜົ້ງສາລີ, 1 ເມືອງ - ອຸດົມໄຊ, 3 ເມືອງ-ຫົວພັນ ແລະ 2 ເມືອງ-ຊຽງຂວາງ) |
| 2 | ປຶ້ມບັນຊີເງິນສົດ | ຫົວ | 565 | | |
| 3 | ປຶ້ມບັນຊີສາງ | ຫົວ | 565 | | |
| 4 | ປຶ້ມບັນທຶກຂໍ້ມູນ ກອງປະຊຸມ ກພກ | ຫົວ | 565 | | |
| 5 | ປຶ້ມແບບຟອມລົງທະບຽນ ປະຈໍາເດືອນ ຂອງສະມາຊິກ ກພກ | ຫົວ | 565 | | |

3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 20/09/2022 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 10:00 ໂມງ, ຂອງວັນທີ 20/09/2022 ຢູ່ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນ ສີສະຫວາດ, ບ້ານ ນາໄຮ່ດຽວ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ຜູ້ອໍານວຍການກອງທຶນຫລຸດຜ່ອນຄວາມທຸກຍາກ



ພັດນະຄອນ ຄັນທະມີໄຊ